

# ASIATIC BLACK BEAR

## ECOLOGY

**Distribution & Range:** Afghanistan, Bangladesh, Bhutan, Cambodia, China, India, Iran, Japan, North Korea, South Korea, Lao PDR, Myanmar, Nepal, Pakistan, Russia, Taiwan, Thailand, and Viet Nam
**Habitat:** Variety of forest habitats, mainly broadleaf and coniferous. Habitats and elevation may change seasonally
**Diet:** Generalist omnivores; eat shoots, leaves, forbs, insects, fruit, nuts, and occasionally meat

## DISTRIBUTION




**CLASS** Mammalia

**ORDER** Carnivora

**FAMILY** Ursidae

**GENUS** *Ursus*

**SPECIES** *Thibetanus*

## CONSERVATION

**Conservation status:** Vulnerable
**Major Threats:** Targeted hunting for the national and international trade of body parts sold for traditional medicine and live animals for the pet trade, and habitat loss
**Conservation Action:** Research and monitoring, habitat protection, monitoring of national and international trafficking, education, rescue and rehabilitation, and reintroduction




**Species Protection Status in Laos: Prohibition Category 1***

**Protection Category 1: Rare, near extinct, high-value species of special importance in the development of social-economic, environmental, educational scientific research.* ***It is prohibited to hunt this species anywhere and at any time in Laos***

## ACTIVITY & SOCIAL TRAITS

**Social Structure:** Solitary, apart from breeding and mothers with cubs
**Activity:** Both terrestrial and arboreal, and both diurnal and crepuscular. Bears in northern ranges hibernate from October-December, as well as pregnant females
**Reproduction:** Breeding season from June-August
**Gestation:** 5-6 months
**Number of offspring:** 1-2

## PHYSICAL TRAITS

**Family:** Ursidae: a dog-like carnivoran "bear"
**Weight:** Males: 60-200 kg, females: 40-125 kg
**Appearance:** Black fur with a white patch on the chest, large bell-shaped ears, and a small tail

## FUN FACT

**Asiatic black bears** are one of the **largest arboreal mammals** in the world, and spend up to **15%** of their time in trees



# ໝີຄວາຍ (ໝີດຳ)

## ນິເວດວິທະຍາ

**ພື້ນທີ່ອາໄສ:** ອັຟການິສຖານ, ພູຖານ, ບັງກະລາເດດ, ກຳປູເຈຍ, ຈີນ, ອິນເດຍ, ອີຫຼ່ານ, ຍີ່ປຸ່ນ, ເກົາຫຼີເໜືອ, ເກົາຫຼີໃຕ້, ລາວ, ມຽນມາ, ເນປານ, ປາກິສຖານ, ຣັສເຊຍ, ໄຕ້ຫວັນ, ໄທ ແລະ ຫວຽດນາມ
**ແຫຼ່ງທີ່ຢູ່ອາໄສ:** ອາໄສຢູ່ຕາມປ່າໄມ້ຫຼາຍປະເພດ, ສ່ວນໃຫຍ່ຈະເປັນປ່າໄມ້ໃບໃຫຍ່ ແລະ ປ່າໄມ້ໃບເຂັມ; ແຫຼ່ງທີ່ຢູ່ອາໄສ ແລະ ລະດັບຄວາມສູງອາດຈະປ່ຽນແປງຕາມລະດູການ; ອາໄສຢູ່ທັງໜ້າດິນ ແລະ ເທິງຕົ້ນໄມ້.
**ການກິນອາຫານ:** ກິນທຸກຢ່າງເປັນອາຫານທັງພືດ ແລະ ສັດ; ກິນຍອດໄມ້, ໃບໄມ້, ແມງໄມ້, ໝາກໄມ້, ຖົ່ວ ແລະ ຊີ້ນສັດເປັນບາງຄັ້ງຄາວ

## ພື້ນທີ່ອາໄສ




**ຊັ້ນ** Mammalia

**ອັນດັບ** Carnivora

**ຕະກຸນ** Ursidae

**ສະກຸນ** *Ursus*

**ຊະນິດ** *Thibetanus*

## ການອະນຸລັກ

**ສະຖານະພາບການອະນຸລັກ:** **ມີຄວາມສ່ຽງໃກ້ສູນພັນ**
**ໄພຂົ່ມຂູ່ຕົ້ນຕໍ:** ການລ່າສັດແບບກຳນົດເປົ້າໝາຍເພື່ອການຊື້ຂາຍທັງພາຍໃນ ແລະ ຕ່າງປະເທດ ສຳລັບສິ້ນສ່ວນຂອງຮ່າງກາຍທີ່ຂາຍເພື່ອຜະລິດເປັນຢາພື້ນເມືອງ ແລະ ການຊື້ຂາຍສັດທີ່ຍັງມີຊີວິດເພື່ອເປັນສັດລ້ຽງ ແລະ ການສູນເສຍແຫຼ່ງທີ່ຢູ່ອາໄສ
**ການປະຕິບັດການອະນຸລັກ:** ການຄົ້ນຄວ້າ ແລະ ການຕິດຕາມ, ການປົກປັກຮັກສາແຫຼ່ງທີ່ຢູ່ອາໄສ, ການຕິດຕາມການຊື້ຂາຍຜິດກົດໝາຍທັງພາຍໃນ ແລະ ຕ່າງປະເທດ, ການສຶກສາ, ການຊ່ວຍເຫຼືອ ແລະ ການຟື້ນຟູສະພາບຊີວິດ ແລະ ການປ່ອຍຄືນສູ່ທຳມະຊາດ




**ສະພາບການປົກປັກຮັກສາພັນສັດປ່າໃນລາວ: ປະເພດຫວງຫ້າມ 1***
ປະເພດຄຸ້ມຄອງ *1:* ຊະນິດພັນທີ່ຫາຍາກ, ໃກ້ສູນພັນ, ແລະ ມີມູນຄ່າສູງ ເຊິ່ງມີຄວາມສຳຄັນພິເສດຕໍ່ການພັດທະນາເສດຖະກິດ-ສັງຄົມ, ສິ່ງແວດລ້ອມ, ການສຶກສາຄົ້ນຄວ້າວິທະຍາສາດ. ຫ້າມບໍ່ໃຫ້ມີການລ່າສັດຊະນິດນີ້ຕາມອຳເພີໃຈໃນລາວ

## ພຶດຕິກຳ ແລະ ລັກສະນະທາງສັງຄົມ

**ໂຄງສ້າງທາງສັງຄົມ:** ມັກຢູ່ແບບໂດດດ່ຽວ, ຈະມີຄູ່ກໍ່ຕໍ່ເມື່ອໃນລະດູປະສົມພັນ ແລະ ແມ່ທີ່ມີລູກນ້ອຍ.
**ພຶດຕິກຳ:** ອອກຫາກິນໃນຍາມກາງເວັນ ແລະ/ຫຼື ຊ່ວງຄ້າຍແລງ (ຊ່ວງຕາເວັນກຳລັງຈະຕົກດິນ). ໝີໃນເຂດພາກເໜືອຈະຈຳສິນແຕ່ເດືອນຕຸລາຫາເດືອນທັນວາ ແລະ ໂຕແມ່ທີ່ຖືພາກໍຈະຈຳສິນເຊັ່ນກັນ.
**ການສືບພັນ:** ລະດູປະສົມພັນຈະເລີ່ມແຕ່ເດືອນມິຖຸນາຫາເດືອນສິງຫາ
**ການຖືພາ:** 5-6 ເດືອນ
**ຈຳນວນລູກ:** 1-2 ໂຕ

## ລັກສະນະທາງກາຍະພາບ

**ຕະກຸນ:** Ursidae, ອັນດັບ carnivoran "ໝີ" ທີ່ມີລັກສະນະຄ້າຍຄືໝາ
**ນ້ຳໜັກ:** ໂຕຜູ້: 60-200 ກລ, ໂຕແມ່: 40-125 ກລ
**ລັກສະນະ:** ມີຂົນຍາວລຽບສີດຳຫຸ້ມລຳໂຕ ແລະ ແຜ່ນສີຂາວຢູ່ບໍລິເວນໜ້າເອິກ, ມີຫູເປັນຮູບລະຄັງຂະໜາດໃຫຍ່ ແລະ ມີຫາງນ້ອຍ

## ສິ່ງທີ່ຄວນຮູ້

ໝີຄວາຍ (ໝີດຳ) ເປັນສັດລ້ຽງລູກດ້ວຍນ້ຳນົມປະເພດໜຶ່ງທີ່ມີຂະໜາດໃຫຍ່ທີ່ສຸດຂອງໂລກ ທີ່ອາໄສຢູ່ເທິງຕົ້ນໄມ້ ແລະ ໃຊ້ເວລາຢູ່ເທິງຕົ້ນໄມ້ດົນເຖິງ 15%